ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໕/ປພຖຊ/໐໕໔໑໐໙**

# ບົດຄວາມ

## ຕອບໂຕ້ພອນປີໃໝ່ ພສ. 2552

## ຂອງ ປະທານປະເທດ (ຕອນຈົບ)

## ບັ້ນອາວະສານ ຂອງອຳນາດຜະເດັດການໃນລາວ.

ການບໍລິຫານປະເທດຊາດ ແບບຜະເດັດການພັກດຽວ, ຊ້ຳຫາດ, ຫລ້າສມັຍ ທີ່ພັກຣັດເອົາມາ ປົກຄອງປະເທດຊາດ ເປັນການປົກຄອງ ທີ່ບໍ່ສອດຄ່ອງກັບຊີວິດຈິດໃຈ ຂອງປະຊາຊົນລາວ. ປະຊາຊົນລາວ ເປັນຄົນຊື່ສັດ, ບໍ່ຊີ້ລັກມັກຊົກ, ມີນ້ຳໃຈຮັບຜິດຊອບ ຕໍ່ວຽກງານ, ມີຄວາມກ້າຫານທຳໃນສິ່ງທີ່ຖືກຕ້ອງ, ຮັກກຽດສັກສີ ຂອງຄວາມເປັນມະນຸດ, ຊື່ຕຣົງຕໍ່ຕົນເອງ, ຕໍ່ຄອບຄົວ, ຕໍ່ໝູ່ຄູ່ ແລະຕໍ່ປະເທດຊາດ.- ປະຊາຊົນລາວ ເປັນຄົນທີ່ມີນ້ຳໃຈ ເອື້ອເຟື້ອ ເພື່ອແຜ່ ຊ່ວຍເຫລືອຊຶ່ງກັນແລະກັນ. ມີຄວາມເຄົາຣົບນັບຖືຜູ້ເຖົ້າຜູ້ແກ່, ພໍ່ແມ່ ຄຣູອາຈານ, ເປັນພົລເມືອງດີ ເຄົາຣົບ ຕໍ່ກົດໝາຍ ບ້ານເມືອງ, ຕໍ່ເຈົ້າໜ້າທີ່ແລະເປັນຜູ້ປົກປັກຮັກສາ ສະພາບແວດລ້ອມ. ປະຊາຊົນລາວ ເມື່ອພົບເຫັນກັນ ກໍມີໃບໜ້າຍິ້ມແຍ້ມແຈ່ມໃສ ສແດງອອກເຖິງ ຜູ້ມີມາຣະຍາດອັນດີ ມີສິລທັມປະຈຳໃຈ.

ພັກຣັດ ຈະອາສັຍວຽດນາມແລະນັກລົງທຶນຕ່າງຊາດ ໃຫ້ປົກປ້ອງອຳນາດຜະເດັດການ ໄວ້ໃຫ້ໝັ້ນຄົງນັ້ນ ແມ່ນເປັນໄປບໍ່ໄດ້ອີກແລ້ວ! ເພາະວຽດນາມ ບໍ່ແມ່ນຄົນໂງ່!, ທຸກຢ່າງ

ທີ່ພວກເຂົາທຳໄປ ກໍເພື່ອຜົນປໂຍດ ຂອງຊາດບ້ານເມືອງຂອງພວກເຂົາ, ອັນໃດທີ່ມີຜົນປໂຍດຫລາຍກວ່າ ພວກເຂົາກໍຕ້ອງເຮັດຕ້ອງທຳອັນນັ້ນ.

ດຽວນີ້, ວຽດນາມ ໄດ້ກາຍເປັນມິດທີ່ດີ, ກາຍເປັນຄູ່ຄ້າຂາຍຮ່ວມກັນ ທີ່ສຳຄັນແລະເປັນແຫລ່ງລົງທຶນ ອັນດັບ 5 ຂອງອະເມຣິກາໃນວຽດນາມ, ມີມູນຄ່າ ເຖິງ 5.5 ຕື້ ດອນລາສະຫະຣັດ. ມີບໍຣິສັທນ້ອຍໃຫຍ່ ຫລາຍກວ່າ 1,000 ບໍຣິສັທ ເຂົ້າໄປລົງທຶນແລະ ດຳເນີນກິຈການໄປແລ້ວ ລວມທັງບໍຣິສັທ Intel, Microsoft, General electric, Boeing ດັ່ງນີ້ເປັນຕົ້ນ.

ຄວາມສັມພັນຂອງວຽດນາມ ກັບສະຫະຣັດອະເມຣິກາ ບໍ່ພຽງແຕ່ມີການຊ່ວຍເຫລືອ ເພື່ອພັທນາທາງດ້ານສັງຄົມ ເສຖກິດ, ການຄ້າ, ການລົງທຶນເທົ່ານັ້ນ, ທາງດ້ານການທະຫານ, ກຳປັ່ນກອງທັບເຮືອສະຫະຣັດ ກໍເຂົ້າໄປຈອດທ່າເຮືອຂອງວຽດນາມ ເປັນປະຈຳໃນແຕ່ລະປີ, ມີການ ຮ່ວມມືກັນທາງທະຫານ ຫລາຍຢ່າງ ເປັນຕົ້ນ: ການເກັບກູ້ຮະເບີດບໍ່ທັນແຕກ, ການສອນພາສາອັງກິດ, ການແພດທະຫານ. ນອກຈາກນີ້, ຍັງມີການແລກປ່ຽນຄວາມຮູ້ ທາງວິຊາການທະຫານ ທີ່ຫລັກສາກົນຝຶກແອບກັນ.

ເຖິງແມ່ນວ່າວຽດນາມ ກັບສະຫະຣັດ ມີຄວາມຮັບຮູ້ທາງດ້ານ ປະຊາທິປະໄຕ, ດ້ານສິດທິມະນຸດແລະດ້ານສາສນາ ແຕກຕ່າງກັນກໍຕາມ... ແຕ່ທັງສອງປະເທດ ໄດ້ບັນລຸຂໍ້ຕົກລົງການແກ້ໄຂ ບັນຫານີ້ ຢ່າງຈິງໃຈຕໍ່ກັນ. ກອງປະຊຸມ ຄັ້ງທີ 13 ກ່ຽວກັບສິດທິມະນຸດ ຢູ່ Hanoi ໃນເດືອນ May 29, 2008 ລະຫວ່າງ ຜູ້ຕາງໜ້າສະພາສະຫະຣັດ ກັບຜູ້ຕາງໜ້າສະພາວຽດນາມ ໄດ້ເປັນຫລັກຖານ ບົ່ງບອກເຖິງ ຄວາມສຳເຣັດ ຢ່າງຈົບງາມ ໃນການແກ້ໄຂບັນຫານີ້.

ວຽດນາມ, ນອກຈາກເປັນມິດທີ່ດີ, ເປັນຄູ່ຄ້າຂາຍຮ່ວມກັນທີ່ສຳຄັນ ຂອງສະຫະຣັດແລ້ວ ຍັງເປັນມິດທີ່ດີແລະເປັນຄູ່ຄ້າທີ່ສຳຄັນ ກັບ EU. ອີກດ້ວຍ!. -ນັບແຕ່ປີ 1995 ວຽດນາມ ໄດ້ທຳການຄ້າ ກັບປະເທດສາມະຊິກ EU. ສເລັ່ຽເຖິງ 15-20% ຕໍ່ປີ. ວຽດນາມ ໄດ້ກາຍເປັນຄູ່ຄ້າທີ່ສຳຄັນປະເທດນຶ່ງ ຂອງ EU. ການຄ້າ ໄດ້ມີການຂຍາຍຕົວຂຶ້ນເປັນລຳດັບ. ໃນປີ 2006 ມີ 22.2% ມູນຄ່າ 9.9 ຕື້ດອນລາສະຫະຣັດ. ໃນຊ່ວງ 5 ເດືອນຕົ້ນປີ 2007 ການຄ້າທັງໝົດ ມີມູນຄ່າ 18 ຕື້ດອນລາສະຫະຣັດ. ວຽດນາມສົ່ງອອກໄປ EU. ມີເຖິງ 20% ປະມານ 3.6 ຕື້ດອນລາສະຫະຣັດ.

ນັບຕັ້ງແຕ່ເດືອນ ກັນຍາ 2007 ປະເທດສາມະຊິກ EU. ໄດ້ເຂົ້າໄປລົງທຶນຢູ່ວຽດນາມ 640 ໂຄງການ ມີມູນຄ່າ 8.35 ຕື້ດອນລາສະຫະຣັດ, ທຶນທີ່ລົງທະບຽນໄປແລ້ວ ມີ 4.8 ຕື້ດອນລາສະຫະຣັດ. EU. ລົງທຶນໃນດ້ານ ໂຮງຈັກໂຮງງານແລະດ້ານການກໍ່ສ້າງ 280 ໂຄງການ ເປັນມູນຄ່າ 4.18 ຕື້ດອນລາສະຫະຣັດ. ດ້ານນ້ຳມັນ ມີ 6 ໂຄງການ, ມູນຄ່າ 1.32 ຕື້ດອນລາສະຫະຣັດ. ດ້ານກະສິກັມ ມີ 50 ໂຄງການ ມູນຄ່າ 457.6 ລ້ານດອນລາສະຫະຣັດ ດັ່ງນີ້ເປັນຕົ້ນ.

EU. ເປັນປະເທດທີ່ມີເງິນ ແລະມີເທັກໂນໂລຈີສູງ ທີ່ເຂົ້າໄປຊ່ວຍເຫລືອວຽດນາມ ສ້າງທຸຣະກິດ ໃໝ່ໆຂຶ້ນ ແລະມີເຕັກນິກທາງດ້ານຄຸນະພາບສູງ.

ວຽດນາມ ບໍ່ພຽງແຕ່ ເປັນມິດທີ່ດີ, ເປັນຄູ່ຄ້າທີ່ສຳຄັນ ຂອງສະຫະລັດ ແລະ EU. ເທົ່ານັ້ນ, ຍັງຈະກາຍເປັນຕົວເດັ່ນ ໃນການຄ້າເສລີ ຢູ່ກຸ່ມປະເທດ ສະມາຄົມອາຊຽນອີກດ້ວຍ.

ສັ້ນ, **ບໍ່ມີເຫດຜົນອັນໃດ ທີ່ວຽດນາມ ຈະບໍ່ຢຸດຕິຄອບຄຸມລາວອີກຕໍ່ໄປ, ເພື່ອແລກປ່ຽນກັບຜົນປໂຍດ ອັນມະຫາສານ ທີ່ວຽດນາມ ມີຢູ່ທົ່ວໂລກ ໃນປະຈຸບັນນີ້.** "ເມື່ອສ່ຽວເກົ່າຈະຕົກຮ້າມ, ແຕ່ເພື່ອນໃໝ່ ກໍມີນະໂຍບາຍກວ້າງຂວາງ, ວຽດນາມ ກໍສາມາດເປັນຄູ່ຄ້າຮ່ວມກັນໄດ້ ຢ່າງເສລີອີກດ້ວຍ".

ພັກຣັດຈະກາງຕໍ່ນັກລົງທຶນຕ່າງຊາດ ທີ່ເຂົ້າມາລົງທຶນ ໃນດ້ານຂຸດຄົ້ນບໍ່ແຮ່ໂລຫະ, ສ້າງເຂື່ອນ, ສຳປະທານທີ່ດິນປູກຝັງ, ສ້າງເສຖກິດພິເສດຄົບວົງຈອນຕ່າງໆເຫລົ່ານີ້, ກໍເປັນໄປບໍ່ໄດ້! ເພາະຕ່າງປະເທດເຫລົ່ານັ້ນ, ພວກເຂົາ ເຂົ້າໃຈດີເຖິງຂອບເຂດຄວາມສາມາດ ໃນການບໍຣິຫານປະເທດຊາດ, ເຖິງຄວາມໂປ່ງໃສ ຂອງ ພັກຣັດ ແລະການຕັດສິດທິເສຣີພາບ ຂອງ ປະຊາຊົນ ຍັງມີຢ່າງຕໍ່ເນື່ອງ, ແນ່ນອນ, ຕ້ອງປ່ຽນຣັຖບານ. ດັ່ງນັ້ນ, ພວກເຂົາ ກໍສວຍໂອກາດ ທີ່ສະພາບການເງິນຂອງໂລກ ເກີດວິກິດ... ຈຶ່ງຖືເອົາມາເປັນຂໍ້ອ້າງ ເພື່ອຢຸດຕິກິຈການ, ໂຈະໄວ້ ລໍຖ້າການປ່ຽນແປງໃໝ່ ທີ່ຈະເກີດຂຶ້ນໃນໄວໆນີ້, ຫລັງຈາກນັ້ນ, ຈຶ່ງທຳທຸຣະກິດຄືນໃໝ່ ທີ່ມີ ການຄ້ຳປະກັນ ແລະມີຄວາມໂປ່ງໃສດີ.

ປະກົດການຕົວຈິງ ທີ່ກ່າວມາຂ້າງເທິງນີ້, ໄດ້ບົ່ງບອກເຖິງບັ້ນວາລະສານ ຂອງອຳນາດຜເດັດການໃນລາວ ຢ່າງບໍ່ຕ້ອງສົງໃສ. -ໃນເມື່ອປະຊາຊົນລາວ ບໍ່ສນັບສນູນ, ບວກເຂົ້າ ກັບປະເທດທີ່ປົກປ້ອງຄຸ້ມຄອງ ກໍຄືວຽດນາມນັ້ນເອງ! ທີ່ຖອນຕົວ, ປ່ຽນໃຈໄປເປັນມິດທີ່ດີ, ໄປເປັນຄູ່ຄ້າ ທີ່ສຳຄັນຂອງປະເທດເສຣີ ໃນທົ່ວໂລກແລ້ວ. **ອຳນາດຜເດັດການພັກດຽວໃນລາວ ຈະຢືນ ຢູ່ໄດ້ຢ່າງໃດ?**

ພວກເຮົາ ໄດ້ຮຽກຮ້ອງໃຫ້ພັກຣັດ ສປປລາວ. ອອກມາໂອ້ລົມ ກັບພວກເຮົາຢູ່ເລື້ອຍໆ... ແຕ່ພັກຣັດ ຊ້ຳພັດເມີນເສີຍມາໂດຍຕລອດ. **ດຽວນີ້, ຖ້າວຽດນາມປະຖິ້ມແລ້ວ, ພວກທ່ານ ຈະໄປລີ້ຢູ່ໃສໃນໂລກໜ່ວຍນີ້!, ກໍບໍ່ສາມາດ ໜີພົ້ນຄວາມຜິດໄປໄດ້... ຖ້າຍັງທຳຕົວເປັນປໍຣະປັກຕໍ່ຊາດ ຕໍ່ປະຊາຊົນຢູ່. ສັ້ນ, ຂໍໃຫ້ພັກຣັດ ໄດ້ທົບທວນຄືນໃໝ່ອີກ. -ນະໂຍບາຍການຕໍ່ສູ້ຂອງພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ແມ່ນເພື່ອສ້າງຄວາມສາມະຄີປອງດອງຊາດ, ຢຸດຕິເລື້ອງເກົ່າ-ເຫລົ່າຄວາມຫລັງ, ທີ່ຜ່ານມາ, ຖືວ່າ ເປັນຍ້ອນໂຊກຊາຕາກັມຂອງຊາດບ້ານເມືອງເຮົາ.**

**ພວກເຮົາຄົນລາວລຸ້ນໃໝ່, ສ້າງຄວາມຄິດໃໝ່, ມີສາຍຕາກວ້າງໄກ, ບໍ່ຄວນຈະໃຫ້ປະເທດຊາດຂອງພວກເຮົາ ຕ້ອງສູນເສັຽໄປຫລາຍກວ່ານີ້ອີກ, ຄວນປະຖິ້ມອຳນາດຜເດັດການ ແລ້ວຫັນໜ້າເຂົ້າມາ ແກ້ໄຂບັນຫາຊາດຮ່ວມກັນ, ພ້ອມກັນສ້າງເມືອງລາວຄືນໃໝ່ ໃຫ້ມີຄວາມຈເຣີນສີວິໄລໄປຮອດ 100 ປີ....**

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໑ ພຶສພາ ໒໐໐໙**